VIENTIANE CENTER
ວຽງຈັນເຊັນເຕີ

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄວງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
****

ເລກທີ: 007 /ວຈຊຕ
ນະຄອນຫຼວງວຽງຈັນ, ວັນທີ: 16 APR 2021

ຮຽນ: ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ
ທ່ານຜູ້ອໍານວຍການໃຫຍ່ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ

ເລື່ອງ: ແຈ້ງມະຕິກອງປະຊຸມວິສາມັນ ສະພາບໍລິຫານຂອງບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ຄັ້ງທີ 2 ປະຈໍາ ປີ 2021

- ອີງຕາມຂໍ້ຕົກລົງຂອງຄະນະກໍາມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍລານ ແລະ ການເປີດເຜີຍຂໍ້ມູນ ສະບັບ ເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019.

- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ (ວຈຊຕ) ຂໍຖືເປັນກຽດແຈ້ງມະຕິຂອງກອງປະຊຸມວິສາມັນ ສະພາ ບໍລິຫານ ຄັ້ງທີ 2 ປະຈໍາປີ 2021 ໃນ ວັນທີ 16 ເມສາ 2021, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

<u>ມະຕິ 01:</u> ເຫັນດີການລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2019 ແລະ ໃຫ້ ລາຍງານຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປເພື່ອຮັບຊາບ.

<u>ມະຕິ 02:</u> ເຫັນດີບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2019 ແລະ ໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງ ຖັດໄປເພື່ອພິຈາລະນາຮັບຮອງ.

<u>ມະຕິ 03:</u> ເຫັນດີບົດລາຍງານການເງິນຂອງບໍລິສັດ ປະຈໍາປີ 2020 ແລະ ໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດ ໄປເພື່ອພິຈາລະນາຮັບຮອງ.

ມະຕິ 04: ເຫັນດີຮັບຟັງລາຍງານຜົນການດຳເນີນທຸລະກິດປະຈຳປີ 2020 ແລະ ແຜນການດຳເນີນທຸລະກິດປະຈຳປີ 2021 ແລະ ໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປເພື່ອພິຈາລະນາຮັບຮອງ.

ມະຕິ 05: ເຫັນດີແຜນການຈ່າຍເງິນປັນຜົນປະຈຳປີ 2020 ຂອງບໍລິສັດໃຫ້ຜູ້ຖືຮຸ້ນ ໃນອັດຕາ 12,5 ກີບຕໍ່ຮຸ້ນ ແລະ ໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປເພື່ອພິຈາລະນາຮັບຮອງ.

ມະຕິ 06: ເຫັນດີແຜນການຄັດເລືອກເພື່ອປັບປ່ຽນສະມາຊິກ ແລະ ປະທານຂອງສະພາບໍລິຫານສະໄໝທີ່ 2 ທີ່ລາອອກ ແລະ ໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປເພື່ອພິຈາລະນາຮັບຮອງ.

ມະຕິ 07: ເຫັນດີການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນຂອງບໍລິສັດ ຈາກທ່ານ ນາງ ໂຈວ ເຫຼີ (Ms. Zhou Lei) ມາເປັນ ທ່ານຫວັງເຫວີຍຄຸນ (Mr. Wang Weikun) ແລະ ໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປເພື່ອພິຈາລະນາຮັບຮອງ.

ມະຕິ 08: ເຫັນດີສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອຂໍອະນຸມັດມອບສິດໃຫ້ແກ່ສະພາບໍລິຫານເປັນຜູ້ພິຈາລະນາຮັບຮອງເລື່ອງການຕໍ່ອາຍຸສັນຍາກູ້ຢືມ ລະຫວ່າງບໍລິສັດ ກັບ ບໍລິສັດ ພັດທະນາສຸນເສດຖະກິດການຄ້າຄົບວົງຈອນ ໝອງ ຈັນຕອນເໜືອ ຈຳກັດ ແລະ ໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປເພື່ອພິຈາລະນາຮັບຮອງ.

ມະຕິ 09: ເຫັນດີການວ່າຈ້າງບໍລິສັດ ແອນແອນຢັ້ງ ລາວ ຈຳກັດ ເປັນຜູ້ກວດສອບບັນຊີໃຫ້ ບໍລິສັດ ວຽງຈັນເຊັ້ນ ເຕີ ລາວ ມະຫາຊົນ ໃນສົກປີ 2021 ເຖິງປີ 2023, ຄ່າໃຊ້ຈ່າຍແມ່ນ 31000 $ ຕໍ່ປີ ແລະ ໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປເພື່ອພິຈາລະນາຮັບຮອງ.

ມະຕິ 10: ເຫັນດີການຄັດເລືອກສະມາຊິກຄະນະກຳມະການຂອງບໍລິສັດຄົນໃຫມ່ ແລະ ໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປເພື່ອພິຈາລະນາຮັບຮອງ.

ມະຕິ 11: ເຫັນດີການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍ ສະພາບໍລິຫານ ແລະ ໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຖັດໄປເພື່ອພິຈາລະນາຮັບຮອງ.

ມະຕິ 12: ເຫັນດີແຜນການຈັດຕັ້ງປະຕິບັດກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2020 ຄືດັ່ງລຸ່ມນີ້:

1. ເວລາ ແລະ ສະຖານທີ່ປະຊຸມ: ກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2020 ຊຶ່ງຈັດຂຶ້ນໃນວັນທີ 30 ເມສາ 2021 ເວລາ 14:00 ໂມງ ທີ່ ຫ້ອງປະຊຸມ ໄດເອີ້ມ້ອນ ຂອງໂຮງແຮມແລນມາກ.

2. ເນື້ອໃນຂອງແຕ່ລະບົດລາຍງານ ແລະ ວາລະທີ່ຈະສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2020 ພິຈາລະນາ ແລະ ຮັບຮອງ ຄືດັ່ງລຸ່ມນີ້:

ວາລະທີ 01: ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019.

ວາລະທີ 02: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019.

<u>ວາລະທີ 03:</u> ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນຂອງບໍລິສັດປະຈຳປີ 2020.

<u>ວາລະທີ 04:</u> ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2020 ແລະ ແຜນການດຳເນີນທຸລະກິດປີ 2021

<u>ວາລະທີ 05:</u> ພິຈາລະນາ ແລະ ຮັບຮອງແຜນການຈ່າຍເງິນປັນຜົນປະຈຳປີ 2020 ຂອງບໍລິສັດໃຫ້ຜູ້ຖືຮຸ້ນ.

<u>ວາລະທີ 06:</u> ພິຈາລະນາ ແລະ ຮັບຮອງການຄັດເລືອກເພື່ອປັບປ່ຽນສະມາຊິກ ແລະ ປະທານຂອງສະພາບໍລິຫານ ສະໄໝທີ່ 2 ທີ່ລາອອກ.

<u>ວາລະທີ 07:</u> ພິຈາລະນາ ແລະ ຮັບຮອງການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນຂອງ ວຈຊຕ.

<u>ວາລະທີ 08:</u> ພິຈາລະນາ ແລະ ອະນຸມັດການຂໍສິດເປັນຜູ້ພິຈາລະນາ ແລະ ຮັບຮອງເລື່ອງການຕໍ່ອາຍຸສັນຍາກູ້ຢືມ ຂອງ ວຈຊຕ.

<u>ວາລະທີ 09:</u> ພິຈາລະນາ ແລະ ອະນຸມັດການວ່າຈ້າງບໍລິສັດກວດສອບບັນຊີໃຫ້ ວຈຊຕ.

<u>ວາລະທີ 10:</u> ພິຈາລະນາ ແລະ ອະນຸມັດການຄັດເລືອກສະມາຊິກຄະນະກຳມະການຂອງບໍລິສັດຄົນໃຫມ່.

<u>ວາລະທີ 11:</u> ພິຈາລະນາ ແລະ ອະນຸມັດການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.

<u>ວາລະທີ 12:</u> ຖ້າມີ

ປະທານສະພາບໍລິຫານ

